ອົງການຄະນະກຳມະທິການແມ່ນ້ຳຂອງສາກົນໄດ້ແຕ່ງຕັ້ງປະທານບໍລິຫານຄົນໃໝ່

ນະຄອນຫຼວງວຽງຈັນ, ສາທານະລະລັດປະຊາທິປະໄຕປະຊາຊົນລາວ
ວັນທີ 16 ພະຈິກ 2011

ທ່ານຮັນຄັດແມນ(Hans Guttman)ແມ່ນຊື່ຂອງປະທານຜູ້ບໍລິຫານຄົນໃໝ່ຂອງກອງເລຂາຄະນະກຳມະທິການແມ່ນ້ຳຂອງສາກົນ.

ຄັດແມນຜູ້ທີ່ໄດ້ຮັບການພິສູດແລ້ວວ່າເປັນຜູ້ທີ່ມີຄວາມຊຳນານໃນການບໍລິຫານຈັດການແລະປະສານກັບຫ້ອງການຕົວແທນດ້ານການພັດທະນາກວ່າ 50 ໜ່ວຍງານໃນ 5 ປະເທດລຸ່ມແມ່ນ້ຳຂອງເມື່ອຄັ້ງທີ່ເພິ່ນເຮັດວຽກກັບພັນທະມິດພື້ນທີ່ຊຸ່ມນ້ຳ (Wetland Alliance)ໄດ້ເຂົ້າຮັບຕຳແໜ່ງເປັນເວລາ3ປີກັບກອງເລຂາຄະນະກຳມະທິການແມ່ນ້ຳຂອງສາກົນວັນທີ14ພະຈິກ2011ບ່ອນທີ່ເພິ່ນຈະເປັນຜູ້ນຳພາແລະກວດກາພະນັກງານ150 ຄົນຈາກສຳນັກງານກອງເລຂາຄະນະກຳມະທິການແມ່ນ້ຳຂອງສາກົນທັງສອງບ່ອນໃນພະນົມເປັນແລະນະຄອນຫຼວງວຽງຈັນ.

ຄວາມຊ່ຽວຊານຂອງເພິ່ນທາງດ້ານເຕັກນິກແລະຄວາມຮູ້ຂອງເພິ່ນທີ່ໄດ້ມາແຕ່ການຢູ່ອາໃສໃນພູມິພາກນີ້ເກືອບ20ປີເຮັດໃຫ້ເພິ່ນສາມາດນຳອົງການແມ່ນ້ຳຂອງສາກົນໃນຊ່ວງເວລາແຫ່ງການປ່ຽນແປງແລະເຕີບໃຫ່ຍໃນອົງການແມ່ນ້ຳຂອງສາກົນ.

ການມີເຊື້ອຊາດສະວິເດັນຂອງເພິ່ນບໍ່ແມ່ນເລື່ອງແປກສຳລັບອົງການແມ່ນ້ຳຂອງສາກົນຫຼືວິໃສທັດຂອງອົງການແມ່ນ້ຳຂອງສາກົນເພາະເພິ່ນໄດ້ເຄີຍເຮັດວຽກເປັນຫົວໜ້າພະແນກແຜນງານສິ່ງແວດລ້ອມໄດ້ 6 ປີຕັ້ງແຕ່ 2001- 2007.
ການດຳລົງຕຳແໜງໃນເມື່ອກ່ອນຂອງເພິ່ນກັບກອງເລຂາຄະນະກຳມະທິການແມ່ນ້ຳຂອງສາກົນຈະຮັບປະກັນເຖິງຄວາມຮູ້ໃນປະເດັນທີ່ກ່ຽວຂ້ອງກັບອົງການແມ່ນ້ຳຂອງສາກົນທີ່ຈະເຮັດໃຫ້ເພິ່ນສາມາດນຳພາອົງການແມ່ນ້ຳຂອງສາກົນຜ່ານເວລາສຳຄັນໃນການປ່ຽນແປງທີ່ເກີດຂຶ້ນຢ່າງໄວວາ.

“ຂ້ອຍເຂົ້າໃຈວ່າຕຳແໜ່ງປະທານຜູ້ບໍລິຫານແມ່ນໂອກາດທີຈະເຮັດໃຫ້ເກີດຄວາມສຳເລັດໃນການຮ່ວມມືຂອງອົງການແມ່ນ້ຳຂອງສາກົນແລະການໄດ້ມີສ່ວນຮ່ວມໃນການເຮັດໃຫ້ເກີດຄວາມແຕກ

ຕ່າງໂດຍມີເປົ້າໝາຍສຳຄັນໃນລະດັບໂລກເພື່ອປັບປຸງພັດທະນາແລະບໍລິຫານຈັດການຊັບພະຍາກອນນ້ຳທີ່ມີຄ່າຂອງພວກເຮົາ" ຄັດແມນກ່າວ

ດ້ວຍຊື່ສຽງທາງວິຊາການຂອງເພິ່ນທີ່ໄດ້ມີການຕີພິມປຶ້ມຫຼາຍກວ່າ 10
ຫົວເພິ່ນເປັນທີ່ຮູ້ຈັກໃນພູມີພາກໃນຖານະຜູ້ຊ່ຽວຊານທາງດ້ານການບໍລິຫານຈັດການຊັບພະຍາກອນທາງນ້ຳໃນລຸ່ມແມ່ນ້ຳຂອງ.

ຊາຍຊານເມືອງໂກເບີກ (Göteberg), ປະເທດສະວີເດັນໂດຍກຳເນີດຜູ້ນີ້ອາຍຸ 46 ປີ
ມີລູກຊາຍໜຶ່ງຄົນແລະມັກຕຶກປາໃນຍາມວ່າງ.